ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ກົມບໍລິຫານ
ເລກທີ 0229 ກວຕ
ລົງວັນທີ 31 JAN 2014
ເວລາ 16 03
ສົ່ງເຖິງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ                                        ເລກທີ 36 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 28.1.2014

# ດຳລັດ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການຮັບຮອງ, ຢັ້ງຢືນ ແລະ ການຍົກເວັ້ນ
## ສະເພາະບາງບັນຫາທີ່ຕິດພັນກັບໂຄງການເຂື່ອນໄຟຟ້ານ້ຳຕົກ ນ້ຳລີກ 1

ໂດຍອີງຕາມ:

- ກົດໝາຍວ່າດ້ວຍການສ້າງນິຕິກຳ ເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ກົດໝາຍວ່າດ້ວຍໄຟຟ້າ (ປັບປຸງ) ເລກທີ 03/ສພຊ, ລົງວັນທີ 20 ທັນວາ 2011 (**ກົດໝາຍວ່າດ້ວຍໄຟຟ້າ**);
- ກົດໝາຍວ່າດ້ວຍທີ່ດິນ ເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003 (**ກົດໝາຍວ່າດ້ວຍທີ່ດິນ**);
- ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ ເລກທີ 02-96/ສພຊ, ລົງວັນທີ 11 ຕຸລາ 1996 (**ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ**);
- ດຳລັດວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 119/ນຍ, ລົງວັນທີ 20 ເມສາ 2011 (**ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**);
- ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ເລກທີ 362/ນຍ, ລົງວັນທີ 19 ຕຸລາ 2007 (**ດຳລັດວ່າດ້ວຍກົດໝາຍພາສີ**);
- ດຳລັດວ່າດ້ວຍປ່າປ້ອງກັນ ເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010 (**ດຳລັດວ່າດ້ວຍປ່າປ້ອງກັນ**);
- ດຳລັດວ່າດ້ວຍການເຊົ່າ ຫລື ສຳປະທານທີ່ດິນຂອງລັດ ເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009 (**ດຳລັດວ່າດ້ວຍການເຊົ່າ ຫລື ສຳປະທານ ທີ່ດິນຂອງລັດ**);
- ດຳລັດວ່າດ້ວຍລະບອບປະກັນສັງຄົມສຳລັບຜູ້ອອກແຮງງານໃນວິສາຫະກິດ ເລກທີ 207/ນຍ, ລົງວັນທີ 23 ທັນວາ 1999 (**ດຳລັດວ່າດ້ວຍລະບອບປະກັນສັງຄົມ**):
- ສັນຍາສຳປະທານໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳລີກ1 (**ສັນຍາສຳປະທານ**), ລົງວັນທີ 6 ກຸມພາ 2013 ແລະ ເຊັນໂດຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (**ລັດຖະບານລາວ**) ຕາງໜ້າໂດຍກະຊວງ ແຜນການ ແລະ ການລົງທຶນ ແລະ ບໍລິສັດ ໄຟຟ້ານ້ຳລີກ 1 ຈຳກັດ (**ບໍລິສັດ**) ກ່ຽວກັບໂຄງການເຂື່ອນໄຟຟ້ານ້ຳຕົກນ້ຳລີກ 1 (**ໂຄງການ**);
- ສັນຍາເຊົ່າທີ່ດິນສຳລັບສິດນຳໃຊ້ທີ່ດິນແຕ່ຜູ້ດຽວຂອງພື້ນທີ່ບາງສ່ວນຂອງສະຖານທີ່ (**ສັນຍາເຊົ່າ**

ທີ່ດິນ), ລົງວັນທີ 3 ມັງກອນ 2014 ແລະ ເຮັດຂຶ້ນລະຫວ່າງບໍລິສັດ ໄຟຟ້ານ້ຳລີກ 1 ຈຳກັດ (ບໍລິສັດ) ແລະ ລັດຖະບານລາວ, ຕາງໜ້າໂດຍ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

- ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຮັບຮອງເອົາການຕົກລົງໃຫ້ສຳປະທານແກ່ບໍລິສັດ ໄຟຟ້ານ້ຳລີກ 1 ຈຳກັດ ເລກທີ 141, ລົງວັນທີ 27 ທັນວາ 2013; (ຄຳສັບພິມໃຫຍ່ທີ່ບໍ່ໄດ້ນິຍາມໄວ້ໃນດຳລັດສະບັບນີ້ ໃຫ້ມີຄວາມໝາຍຕາມທີ່ໃຫ້ໄວ້ໃນສັນຍາສຳປະທານ).

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ດຳລັດສະບັບນີ້ອະນຸມັດ:**

1.1 ອີງຕາມມາດຕາ 66 (2) ຂອງ **ກົດໝາຍວ່າດ້ວຍທີ່ດິນ**, ສິດຂອງ ບໍລິສັດ ໃນການນຳໃຊ້ຊັບສິນຄົງທີ່, ຊຶ່ງຕັ້ງເທິງທີ່ດິນທີ່ເຊົ່າ ເປັນຫລັກຊັບຄ້ຳປະກັນ;

1.2 ອີງຕາມມາດຕາ 18 ແລະ 19 ຂອງ **ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ**, ການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳຂະໜາດໃຫຍ່ ແລະ ກິດຈະກຳຂະໜາດໃຫຍ່ ສຳລັບຈຸດປະສົງຂອງໂຄງການ ແລະ ການຄຸ້ມຄອງໂຄງການ;

1.3 ອີງຕາມມາດຕາ 34 (3) ຂອງ **ກົດໝາຍວ່າດ້ວຍໄຟຟ້າ** ຈຶ່ງຮັບຮອງໃຫ້ການພັດທະນາ, ກໍ່ສ້າງ ແລະ ເຄື່ອນໄຫວ ໂຄງການ ລວມເອົາກຳລັງຕິດຕັ້ງທັງໝົດຂອງໂຄງການປະມານ 64.7 MW;

1.4 ຂໍ້ຕົກລົງລາຄາໄຟຟ້າທີ່ໄດ້ລະບຸໄວ້ໃນສັນຍາຊື້ຂາຍໄຟຟ້າແມ່ນສອດຄ່ອງ, ຖືກຕ້ອງຕາມມາດຕາ 47 ແລະ 48 ຂອງ **ກົດໝາຍວ່າດ້ວຍໄຟຟ້າ**.

**ມາດຕາ 2 ດຳລັດສະບັບນີ້ໄດ້ຍົກເວັ້ນ:**

2.1 ບໍລິສັດຈາກມາດຕາ 4 ຂອງ **ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນຕ້ອງຖອກທຶນຢ່າງນ້ອຍຊາວສ່ວນຮ້ອຍ (20%) ຂອງທຶນຈົດທະບຽນເບື້ອງຕົ້ນ ຂອງ ບໍລິສັດພາຍໃນ 90 ວັນລັດຖະການ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ ແລະ ຖອກທຶນຈົດທະບຽນທີ່ເຫລືອ ພາຍໃນ 2 ປີ ນັບແຕ່ວັນທີ່ສ້າງຕັ້ງບໍລິສັດ ແລະ ຕ້ອງຖອກເປັນເງິນກີບ;

2.2 ບໍລິສັດຈາກມາດຕາ 15 (1) ຂອງ **ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນຕ້ອງຈ່າຍເງິນມັດຈຳຄ້ຳປະກັນໃນ ຈຳນວນ 30.000 ໂດລາສະຫະລັດ ສຳລັບການກໍ່ສ້າງໂຄງການໄຟຟ້າພະລັງນ້ຳ ທີ່ມີຂະໜາດກຳລັງຕິດຕັ້ງສູງກວ່າ 5 MW ຫາ 100 MW;

2.3 ບໍລິສັດຈາກຂໍ້ກຳນົດໃນມາດຕາ 18 ຂອງ **ດຳລັດວ່າດ້ວຍກົດໝາຍການສົ່ງເສີມການລົງທຶນ**, ຊຶ່ງຖ້າບໍ່ໄດ້ຍົກເວັ້ນຕ້ອງກຳນົດໃຫ້ບໍລິສັດຖອກທຶນຈົດທະບຽນທັງໝົດກ່ອນທີ່ຈະມີການໂອນຮຸ້ນໃຫ້: (i) ບໍລິສັດໃນເຄືອຂ່າຍ, (ii) ເມື່ອມີການບັງຄັບປະຕິບັດໂດຍຜູ້ໃຫ້ກູ້ຢືມ ຫລື (iii) ລະຫວ່າງຜູ້ຖືຮຸ້ນດ້ວຍກັນ.

2.4 ບໍລິສັດຈາກມາດຕາ 12, 13 ແລະ 14 ຂອງ **ດຳລັດວ່າດ້ວຍກົດໝາຍພາສີ** ຫລືລະບຽບການອື່ນ ເພື່ອເຮັດໃຫ້ບໍລິສັດບໍ່ຕ້ອງຖືກກຳນົດໃຫ້ເຮັດສັນຍາຄ້ຳປະກັນໃດໆ ຫລື